ນິທານຮູບແກ້ວ ເລື່ອງສຽວສະຫວາດ ວັດຊຽງທອງ

ທຸມພັນ ຣັດຕະນະວົງ

# ປາກຂ້າເພິ່ນໂຕຕາຍ



- ສັບພະເຫຼວຫຼາກ
- ຂວານເກົ່າກູໄປ ເອົາຂວານເກົ່າກູມາ
- ຍອດຄຳສອນສຽວສະຫວາດ

ສະຖາບັນຄົ້ນຄວ້າວັດທະນະທຳ

2001

ນິທານຮູບແກ້ວ ເລື່ອງສຽວສະຫວາດ ວັດຊຽງທອງ

ທຸມພັນ ຣັດຕະນະວົງ

# ຢາກຂ້າເພິ່ນໂຕຕາຍ

- ສັບພະເຫຼວຫຼາກ
- ຂວານເກົ່າກູໄປ ເອົາຂວານເກົ່າກູມາ
- ຍອດຄຳສອນສຽວສະຫວາດ

ສະຖາບັນຄົ້ນຄວ້າວັດທະນະທຳ

2001

✧ **ລິດຈະນາເລື່ອງ** : - ຮູບພາບ : ທຸມພັນ ຣັດຕະນະວົງ

✧ **ຈັດໜ້າ** :
✸ ຄຳເມີງ ສູນດາຣາ
✸ ບົວໄລ ເພັງແສງຄຳ
✸ ຈິດຕາ ຈັນທະບັນ

**ສະຫງວນລິຂະສິດຂອງຜູ້ລິດຈະນາ**

❖ ທະບຽນເລກທີ່ : ຕາມ ທບ: 35/ ພຈ19042001
❖ ພິມຄັ້ງທີ່ : ໜຶ່ງ
❖ ຈຳນວນພິມ : 1000 ເຫຼັ້ມ
❖ ຂະໜາດ : 18 x 25 ຊມ
❖ ພິມທີ່ : ໂຮງພິມ ດາວວິໄລ

**ສະໜັບສະໜູນໂດຍ:**

**THE ALBERT KUNSTADTER FAMILY FOUNDATION**
**1035 FIFTH AVENUE**
**NEW YORK, NEW YORK 10028**

# ສາທຸໃຫຍ່ ຄຳມ້າວ

ສາທຸໃຫຍ່ຄຳມ້າວ (ມື້ລາງ) ເກີດເມື່ອ ເດືອນເຈັດ ອອກໃໝ່ 2 ຄ່ຳ ປີ 1921 ທີ່ບ້ານ ຄີລີ ນະຄອນ ຫລວງພະບາງ. ເມື່ອອາຍຸໄດ້ 11 ປີ ເພິ່ນໄດ້ບວດ ເປັນຈົວຢູ່ວັດປາກຄານ ແລະ ໄດ້ຮຽນອ່ານຮຽນ ຂຽນນະວັດນັ້ນ ຈົນເຖິງ ອາຍຸ18 ປີ ຈຶ່ງສິກ. ເມື່ອ ສິກມາແລ້ວ ກໍໄດ້ເຂົ້າ ເປັນມະຮາດເລັກ ທີ່ພະ ລາຊະວັງ. ສົງຄາມໂລກ ຄັ້ງທີ່ ສອງ ລະເບີດຂຶ້ນ ກອງທັບ ຍີ່ປຸ່ນ ເຂົ້າມາ ຂັບໄລ່ ທະຫານ ຝຣັ່ງ ອອກໄປ ຂະບວນແນວ ລາວອິດສະລະ ເກີດຂຶ້ນ ເພິ່ນກໍໄດ້ ເຂົ້າເປັນ ທະ ຫານ ລາວອິດສະລະ ກູ້ ຊາດ ໂດຍໄດ້ເຂົ້າຮ່ວມ ບັ້ນຮົບ ຫຼາຍບັ້ນ ເຊິ່ງໃນ ນັ້ນ ມີບັ້ນໜຶ່ງ ທີ່ເພິ່ນ ເກືອບຈົບຊີວິດລົງ ເມື່ອ ເວລາ ລ່ອງເຮືອ ມາແຕ່ ທາງເໜືອ ແລ້ວຖືກເຮືອ ບິນຂອງຝຣັ່ງຍິງ. ເພື່ອນ ຂອງເພິ່ນຜູ້ໜຶ່ງ ທີ່ຢູ່ຖັດ ຫລັງຂອງເພິ່ນ ໃນເວລາ ນັ້ນຖືກລູກປືນຕາຍກັບທີ່. ຕໍ່ມາ ເມື່ອກອງທັບ ລ່າ



ເມືອງຂຶ້ນ ກັບຄືນເຂົ້າມາຍຶດຄອງລາວ ເພິ່ນກໍຖືກເກນໃຫ້ເຂົ້າເປັນທະຫານຝຣັ່ງ ເຊິ່ງໄດ້ປະ ຈຳການຢູ່ເຂດເມືອງກາສີ ຫນອງແຮດ ຊຽງຂວາງ ແລະ ອື່ນໆ. ມາເຖິງປີ 1948 ເພິ່ນໄດ້ ອ້ອນວອນ ຂໍອອກທະຫານ ຕໍ່ຜູ້ບັງຄັບບັນຊາ ແລະ ກໍໄດ້ສົມປະສົງ. ເນື່ອງຈາກ ເພິ່ນມີຈິດ ໃຈ ຢາກບຳເພັນຕົວເອງ ໃຫ້ເປັນປະໂຫຍດແກ່ວັດວາສາສະໜາ ແລະ ປະເທດຊາດບ້ານ ເມືອງ ເພິ່ນຈຶ່ງເຂົ້າບວດເປັນພະ ໃນປີດຽວກັນນັ້ນ ຢູ່ທີ່ວັດຊຽງທອງ. ເວລານັ້ນ ວັດຮົກເຮື້ອ

ເປ່ເພ ແລະ ຊຸດໂຊມຫລາຍ ເພິ່ນຈຶ່ງຂໍອະນຸຍາດ ນຳກະຊວງທັມມະການ ຂໍຊື້ໄມ້ ມາປະຕິສັງຂອນວັດ. ເມື່ອໄດ້ຮັບອະນຸຍາດແລ້ວ ເພິ່ນກໍທຳເຮືອຂອງວັດ ພ້ອມດ້ວຍ ສາມະເນນ ຂຶ້ນເມືອບ້ານຊ່າງໄຫ ຫ້ວຍເຢາະ ບ່ອນທີ່ປະຊາຊົນຖາກໄມ້ຂາຍ. ເພິ່ນຈຶ່ງໄດ້ໄມ້ຄາດໂມະໃສ່ເຮືອລ່ອງມາ ແລ້ວກໍຈັດແຈງ ເລື່ອຍດ້ວຍຕົນເອງ ກັບສາມະເນນ ພໍໄດ້ປົວແປງບ່ອນຊຸດໂຊມ. ມາເຖິງເດືອນ 3 ປີ 1952 ທຸກຢ່າງກໍສຳເລັດຮຽບຮ້ອຍ. ຈາກນັ້ນມາກໍເລີ່ມສ້າງອຸມຸງ ຫໍໄຕ ຫໍພະຕ່າງໆສຳເລັດ. ພໍດີມາເຖິງ ປີ 1960 ອົງກະສັດໃນວັງ ເພິ່ນໄດ້ມາຢາມ ແລະ ໄດ້ຕົກລົງໃຫ້ການອຸປະຖຳການບູລະນະສ້າງສາວັດ ໃຫ້ປານີດ ແລະ ງົດງາມຂຶ້ນ. ສາທຸໃຫຍ່ເລົ່າໃຫ້ຟັງວ່າ: "ເພິ່ນໄດ້ເອົາຫນັງສື ເລື່ອງສຽວສະຫວາດ ເລື່ອງທ້າວຈັນທະພານິດ ແລະ ທ້າວເຕົ່າຄຳມາໃຫ້ພ້ອມ ແລ້ວກໍຊື້ແກ້ວນາງສີ ຈາກຍີ່ປຸ່ນມາໃຫ້ພ້ອມ ແລະ ຂໍໃຫ້ ອາຕະມາ ປະກອບພາບແກ້ວ ຕາມຫໍໄຕ ຫໍພະຕ່າງໆ ໃຫ້ງົດງາມທີ່ສຸດ.

ນີ້ເອງເປັນທີ່ມາ ຂອງນິທານຮູບແກ້ວ ຝາພະຫນັງ ວັດຊຽງທອງ. ເມື່ອເປັນເຊັ່ນນັ້ນແລ້ວ ອາຕະມາ ຈຶ່ງໄດ້ໄປເອົາ ທິດບຸນທັນ ມາຊ່ວຍ ໃນການຄິດຄົ້ນປະດັບພາບຕ່າງໆ. ທິດບຸນທັນ ເກີດຢູ່ ບ້ານຄົກເຮືອ ບວດຢູ່ວັດບ້ານຊຽງແມນ ມີເມັຽ ຊື່ ສາວອ້ອນ ແຕ່ບໍ່ມີລູກນຳກັນຈັກຄົນ. ທິດບຸນທັນ ເປັນຜູ້ມີພອນສະຫວັນ ບໍ່ໄດ້ຮ່ຳບໍ່ໄດ້ຮຽນຫຍັງຈາກໃສ ບວດຢູ່ວັດແຕ່ກໍມີພອນສະຫວັນໃນຕົວ ເປັນຊ່າງແຕ້ມ ແລະ ວາງສີໃສ່ແຕ່ລະຮູບ. ສ່ວນອາຕະມາ ເປັນຜູ້ຕັດແກ້ວ ດ້ວຍເພັດທັງຫມົດ ຈົນມີກະດ້າງ ແລະ ເສັຽຕາ. ທິດບຸນທັນ ໄດ້ເອົາລູກສິດມາຊ່ວຍຕິດແກ້ວນຳ ສາມຄົນ. ຊ່າງໃນວັງ ເຊັ່ນ: ເພັຽຕັນ, ທ້າວອ້ອນ, ທ້າວມະນີ, ທິດພູມມີ, ຈານເພັງ, ທິດເຮືອນ, ກໍມາອອກແບບທໍ ຄວັດແກະ ແລະ ປະດັບຮູບແກ້ວຕ່າງໆຊ່ວຍກັນເຊັ່ນ ທາງດ້ານຫນ້າສິມ ແມ່ນຮູບ ພຸດທະປະຫວັດ ຫໍພະນອນ ດ້ານໃນແມ່ນນິທານ ຈັນທະພານິດ ດ້ານນອກແມ່ນນິທານ ສຽວສະຫວາດ ຫໍໄຕ ແມ່ນເລື່ອງທ້າວເຕົ່າຄຳ ນີ້ເປັນຕົ້ນ. ທັງຫມົດໃຊ້ເວລາ 3 ປີ ຄື ຮອດທ້າຍປີ 1962 ຈຶ່ງສຳເລັດ. ວັດອື່ນໆເຊັ່ນ ວັດທາດຫລວງ ວັດບ້ານຄອຍ ວັດບ້ານດ່ານ ແມ່ນອາຕະມາ ມາເປັນຜູ້ຕັດແກ້ວຫມົດ. ທິດບຸນທັນ ໄດ້ຮັບນາມະຍົດ ເປັນແສນທັມມະບັນດິດ ຈາກພະຣາຊະວັງ ຍ້ອນຜົນງານອັນລ້ຳເລີດຂອງເພິ່ນ ".

ສາທຸໃຫຍ່ ຄຳມ້າວ ອົງທີ່ໄດ້ອຸທິດຊີວິດນັກບວດຂອງພະອົງ ເປັນເວລານານເຖິງ 50 ກວ່າປີ ເພື່ອອະນຸລັກ ປະຕິສັງຂອນ ແລະ ສ້າງຄວາມງາມຄວາມສະຫງ່າ ໃຫ້ວັດຊຽງທອງ ອັນເປັນຫນຶ່ງ ໃນມໍລະດົກໂລກ ຂອງນະຄອນຫລວງພະບາງນັ້ນ ໄດ້ສະຫວັນນະຄົດໄປແລ້ວ ໃນເດືອນ ກຸມພາ ປີ 2001 ດ້ວຍຄວາມຊະລາ ເມື່ອອາຍຸໄດ້ 80 ປີພໍດີ. ຜົນງານຂອງສາທຸໃຫຍ່ ທີ່ຝາກເປັນມໍລະດົກໄວ້ແກ່ບ້ານແກ່ເມືອງນັ້ນ ປັດຈຸບັນ ແຂກບ້ານແຂກເມືອງຈາກນັບຮ້ອຍ ນັບພັນປະເທດທ້າວ ໄດ້ມາຢ້ຢາມ ແລະ ຊົມທຸກມື້ທຸກວັນຢ່າງບໍ່ຂາດສາຍເລີຍ ອັນນຳເອົາຄວາມເອກອ້າງ ແລະ ກຽດຕິພູມ ມາສູ່ຊາວນະຄອນຫລວງພະບາງ ແລະ ຊາວລາວທັງຊາດດ້ວຍ. ຂໍໃຫ້ດວງວິນຍານ ຂອງສາທຸໃຫຍ່ ຈົ່ງໄປສູ່ສວງສະຫວັນ ອັນປະດັບດ້ວຍພະມະຫາທາດ ເກດແກ້ວຈຸລາມະນີເຈດີ.

5 / 3 / 2001

ທຸມພັນ ຣັດຕະນະວົງ

# ຢາກຂ້າເພິ່ນໂຕຕາຍ

ແຕ່ກີ້ແຕ່ກ່ອນ ທີ່ເມືອງພາລານະສີ ຍັງມີເສດຖີຜູ້ໜຶ່ງ ມີເງິນຮອດແສນໂກດ ແລະມີຂ້ອຍຂ້າມ້າຕ່າງໆຢ່າງອະເນກນອງ ແຕ່ຍັງບໍ່ທັນມີລູກ ຜູ້ຈະມາສືບສ້າງ ເປັນເຊື້ອບໍ່ແທນແນວເລີຍ. ຕໍ່ມາຜູ້ເປັນເມັຍເລີຍຖືພາມີລູກ ອັນເຮັດໃຫ້ເສດຖີຜູ້ເປັນພໍ່ ມີຄວາມຊົມຊື່ນຍິນດີ. ເມື່ອຮອດເດືອນຖ້ວນສິບມາແລ້ວ ເຂົາເລີຍຮີບໄປຫາໝໍເມືອງເພື່ອດູລືກ. ໝໍເມືອງເອົາຫີນແລງ ແລະ ພັບຕຳລາອອກຄູນຫານ ຫລາຍຫລີບຫລາຍຕ່າວ ຢ່າງຖີ່ຖ້ວນ ແລ້ວກໍບອກວ່າ ວັນນີ້ ເຄາະຈອນຫລັກຢູ່ຊ້ອນ ໃນທີ່ລັດສີສິງ ອາທິດຈອນເນົາໃນ ເມດປະຊຸບກໍຈິບພ້ອມໂຊກອັນນີ້ ຊື່ວ່າ ອາພອນຜ້າ ປົກຫົວນອນໃນລືກ ລູກນີ້ເຂົ້າຂອງ ອັນຈັກກິນບໍ່ໄຮ້ ມີໄວ້ອະເນກນອງ ຍິງໃດປະສູດໄດ້ນ້ອຍບໍ່ຍິງຊາຍ ແມ່ນຈັກມີບຸນຫລາຍ ຍົດສູງເປັນເຈົ້າ.

ເມື່ອເສດຖີຮູ້ລືກດີດັ່ງກ່າວນັ້ນແລ້ວ ກໍຮີບຟ້າວກັບຕ່າວຄືນເຮືອນ ນຶກວ່າເມັຽໂຕຈະປະສູດລູກ ໃນມື້ທີ່ເປັນມຸງຄຸນນີ້. ແຕ່ເມື່ອພໍເຖິງເຮືອນ ກໍເຫັນເມັຽຕົນ ຍັງບໍ່ທັນຮ້ອນ ທັນໜາວຫຍັງ ເພາະຍັງອີກເຈັດມື້ຈິ່ງຈະປະສູດ. ເສດຖີຮູ້ສຶກເສົ້າເສັຽໃຈ ທີ່ລູກຕົນ ບໍ່ເກີດມາໃນວັນນີ້ ແຕ່ຄືງແມ່ນລູກໃຜ ຜູ້ໜຶ່ງທີ່ຈະເກີດມາ ແລະ ກໍຈະມີສົມພານ ວາສະໜາ ເໜືອກ່ວາ



ລູກຕົນ ເປັນແມ່. ຄັ້ນພໍຄິດແລ້ວ ເຂົາເລີຍຮຽກເອົານາງກາລີ ຜູ້ເປັນສາວໃຊ້ໃນເຮືອນ ອອກມາວ່າ: "ໃຫ້ມຶງເອົາຄຳໄປພັນໜຶ່ງ ເພື່ອຫາເລາະຊື້ເອົາເດັກ ທີ່ເກີດມື້ນີ້ມາໃຫ້ກູໃຫ້ໄດ້."

ວ່າແລ້ວ ນາງກາລີ ກໍເລີຍຮີບອອກຈາກເຮືອນໄປຫາຊື້ເອົາເດັກນ້ອຍທີ່ເກີດໃນມື້ນັ້ນ. ພໍນາງເດີນໄປຮອດກາງທາງ ກໍພໍດີ ພົບລູກອ່ອນ ໄຫ້ແງ່ວໆຢູ່ແຄມທາງ. ນາງກາລີ ຮ້ອງຫາຜູ້ເປັນແມ່ ແຕ່ກໍບໍ່ເຫັນຜູ້ໃດຂານຕອບ ຈຶ່ງຮູ້ວ່າແມ່ນລູກທີ່ເຂົາຖິ້ມກາງທາງ ນາງຈຶ່ງຮີບໂຈມເອົາໃສ່ກະຕ່າ ຫິ້ວມາຖວາຍເຈົ້າມະຫາເສດຖີ. ເຈົ້າມະຫາເສດຖີເອົາມາລ້ຽງໄວ້ ແຕ່ພໍເມື່ອເຖິງເຈັດວັນ ເມັຽຂອງຕົນກໍເກີດລູກ ທີ່ເປັນສາຍເລືອດຂອງຕົນແທ້ອອກມາ ແຕ່ພັດເກີດໃນມື້ທີ່ບໍ່ເປັນມຸງຄຸນ. ຄວາມອິດສາລິດສະຫຍາ ໄດ້ກາຍເກີດຂຶ້ນໃນໃຈຂອງເຈົ້າເສດຖີ ຈຶ່ງຄິດກຳຈັດ ທ້າວລູກທາງອັນໄດ້ຊື່ວ່າ ທ້າວໂຄສະກະນັ້ນ ດ້ວຍທຸກວິຖີທາງ. ວັນໜຶ່ງເຂົາໄດ້ຈ້າໃຫ້ຄົນໃຊ້ຂອງເຂົາ ເອົາທ້າວໄປຖິ້ມໄວ້ຄອກງົວ ເພື່ອໃຫ້ງົວຢຽບຕາຍ ແຕ່ງົວກໍບໍ່ຢຽບ. ເມື່ອຄົນລ້ຽງງົວມາພໍ້ ເຂົາກໍອີຕົນເອົາໄປລ້ຽງ. ເມື່ອຮູ້ຂ່າວດັ່ງນັ້ນ ເສດຖີກໍເອົາຄຳພັນໜຶ່ງ ໃຫ້ນາງກາລີ ໄປໄຖ່ເອົາຄືນມາ ແລ້ວໃຫ້ເອົາໄປຖິ້ມໃສ່ທາງກວຽນ ເວລາໃກ້ຈະຮຸ່ງ ເມື່ອນາຍກວຽນຂັບກວຽນມາຮອດຫັ້ນ ງົວເລີຍຢຸດ ບໍ່ແກ່ກວຽນໄປ. ເມື່ອນາຍກວຽນ ເຫັນເດັກນ້ອຍອ່ອນ ນອນໄຫ້ຢູ່ທີ່ນັ້ນ ມັນເລີຍຄິດສົງສານ ເອົາໄປລ້ຽງໄວ້. ເຈົ້າເສດຖີ ກໍບອກໃຫ້ນາງກາລີ ໄປໄຖ່ເອົາ



ຄືນມາອີກ ດ້ວຍຄຳພັນໜຶ່ງ ແລ້ວໃຫ້ເອົາໄປຖິ້ມໄວ້ທາງແບ້ເດີນ ເມື່ອແບ້ແມ່ນົມ ມາເຫັນ ເດັກນ້ອຍ ມັນເລີຍໝູບລົງ ເອົານົມໃຫ້ເດັກອ່ອນນັ້ນກິນ ຈົນຝູງແບ້ທັງຫລາຍກາຍໄປໝົດ ແລ້ວ ມັນຈຶ່ງໄປ. ເມື່ອເຈົ້າຂອງແບ້ມາພໍ້ ກໍໄດ້ເອົາໄປລ້ຽງ ແລ້ວເຈົ້າເສດຖີກໍຈຳໃຫ້ນາງກາລີ ໄປໄຖ່ເອົາຄືນມາອີກ ດ້ວຍຄຳພັນໜຶ່ງ ແລ້ວກໍຈຳໃຫ້ນາງກາລີ ເອົາໄປຖິ້ມລົງເຫວໃຫ້ຕາຍ ຫາຍຫ່ວງສາ, ເມື່ອນາງກາລີ ເອົາແອນ້ອຍໂຍນລົງເຫວ ເລີຍຄ້າງຢູ່ພຸ່ມຫຍ້າ ທີ່ໜາຕຶບ. ແຕ່ ນັ້ນ ຍັງມີຊາຍຜູ້ໜຶ່ງ ໄປຮອດທາງນັ້ນ ເພື່ອຈະຕັດເອົາໄມ້ມາສານສາດ ເລີຍໄດ້ຍິນສຽງໄຫ້ ຂອງເດັກນ້ອຍ ເຂົາເລີຍລົງໄປໂຊມເອົາຂຶ້ນມາ ແລ້ວເອົາໄປລ້ຽງໄວ້, ເມື່ອເສດຖີຮູ້ຂ່າວວ່າ ເດັກນ້ອຍໂຄສະກະ ຍັງບໍ່ຕາຍ ເຂົາກໍໃຫ້ນາງກາລີ ເອົາຄຳອີກພັນໜຶ່ງໄປໄຖ່ເອົາ.

ກາລະເວລາ ໄດ້ຜ່ານໄປສາມປີແລ້ວ ແລະ ທ້າວ ໂຄສະກະ ກໍໃຫຍ່ກ້າໜ້າບານ ສ່ວນລູກຊາຍເສດຖີ ກໍໃຫຍ່ກ້າໜ້າບານເຊັ່ນກັນ. ວັນໜຶ່ງ ເສດຖີ ໄດ້ນຳເອົາຄຳພັນໜຶ່ງ ໃຫ້ນາງກາລີ ໄປມອບໃຫ້ຊ່າງເຜົາປູນ ພ້ອມທັງມີຈົດໝາຍນ້ອຍ ໃຫ້ໄປພ້ອມ ເຊິ່ງມີເນື້ອ ໃນວ່າ:

"ມື້ອື່ນ ເຮົາຈະສົ່ງ ທ້າວ ໂຄສະກະ ຖືຈົດໝາຍມາຫາເຈົ້າ ເມື່ອມັນມາຮອດ ໃຫ້ເຈົ້າ ເອົາຖິ້ມເຂົ້າເຕົາປູນຂອງເຈົ້າເຫີດ" ຕົກມື້ອື່ນມາ ເສດຖີກໍປະຕິບັດຕາມແຜນ ໂດຍໃຫ້ ທ້າວ





ໂຄສະກະ ນຳຈົດໝາຍໄປຫາຊ່າງປູນ.

ພໍດີໄປຮອດກາງທາງ ເລີຍໄປພົບລູກເສດຖີ ຜູ້ເຊິ່ງເປັນນ້ອງ ແລ່ນມາຫາ ພ້ອມທັງເວົ້າວ່າ:

"ອ້າຍຈົ່ງຫລິ້ນໝາກບ້ານີ້ ຊ່ວຍນ້ອງແດ່ ນ້ອງຫລິ້ນເສັຽເງິນຫລາຍໂພດແລ້ວ."

ທ້າວໂຄສະກະຕອບວ່າ:

"ອ້າຍມີທຸລະ ພໍ່ເພິ່ນໃຫ້ອ້າຍ ນຳເອົາຈົດໝາຍນີ້ ໄປໃຫ້ຊ່າງປູນດຽວນີ້, ອ້າຍຄົງຫລິ້ນໃຫ້ນ້ອງບໍ່ໄດ້." ລູກເສດຖີ ຜູ້ເປັນນ້ອງນ່ວງນ່ຽວໃຫ້ຫລິ້ນແທນ ໂດຍຂໍອາສາ ຮັບເອົາຈົດໝາຍນັ້ນ ໄປສົ່ງໃຫ້ຊ່າງປູນແທນອ້າຍ. ເມື່ອເຫັນນ້ອງຂໍຮ້ອງວິງວອນຫລາຍ ອ້າຍກໍຂືນໃຈບໍ່ໄດ້ ຈຶ່ງເອົາຈົດໝາຍນັ້ນ ໃຫ້ຜູ້ເປັນນ້ອງ ເອົາໄປແທນ.

ທ້າວໂຄສະກະ ຫລິ້ນໝາກບ້າຖ້ານ້ອງ ຈົນຕາເວັນຄ້ອຍຄ່ຳ ກໍບໍ່ເຫັນນ້ອງກັບມາ ຈຶ່ງແບກເອົາຖົງເງິນ ທີ່ຕົນຫລິ້ນໃຫ້ນ້ອງໄດ້ນັ້ນ ກັບບ້ານ. ເມື່ອເສດຖີ ມາບເຫັນ ທ້າວໂຄສະກະ ຂຶ້ນມາເຮືອນ ກໍຕົກໃຈວາບບາດໜຶ່ງ ຈຶ່ງຖາມທ້າວໂຄສະກະວ່າ ບໍ່ພົບນ້ອງຢູ່ໃສແດບໍ. ທ້າວໂຄສະກະ ເລົ່າເລື່ອງທີ່ເປັນມາສູ່ພໍ່ເສດຖີຟັງທຸກປະການ ເວົ້າບໍ່ທັນສຸດຄວາມ ພໍ່ເສດຖີກໍເລີຍຮີບຟ້າວລົງເຮືອນ ແລ່ນມຸ່ງໜ້າ ໄປຫາຊ່າງປູນທັນທີ, ເມື່ອເຖິງຊ່າງປູນ ຊ່າງປູນກໍ

24/VII ຫ້າມຈຳໜ່າຍ



ເລີຍລາຍງານວ່າ:

"ທຸກສິ່ງທຸກຢ່າງ ທີ່ບອກມາໃນຈົດຫມາຍນັ້ນ ໄດ້ຈັດການຮຽບຮ້ອຍໄປແລ້ວ ແຕ່ງາຍພຸ້ນທຸກປະການ" ຊາບດັ່ງນັ້ນແລ້ວ ເສດຖີກໍເປັນລົມ ຈົນຜູ້ຄົນໄດ້ເປົ່າໄດ້ວີເອົາ ຈຶ່ງຫາຍໃຈຄືນມາ.

ເວລາຜ່ານໄປ ຈາກເດືອນເປັນປີ ແລະ ຫລາຍໆປີຕໍ່ມາ ເຈົ້າເສດຖີ ທີ່ຫວັງຂ້າເພິ່ນ ລູກຕົນເອງພັດຕາຍ ກໍຄ່ອຍຄາຍຄວາມທຸກໂສກມາເປັນລຳດັບ. ສ່ວນທ້າວໂຄສະກະກໍໃຫຍ່ກ້າຫນ້າເຕັມເປັນບ່າວແອງຂຶ້ນມາ. ຄາວນີ້ ພໍ່ເສດຖີ ຕຶກລຶງຈະກຳຈັດ ທ້າວເປັນການແກ້ແຄ້ນຍ້ອນເປັນສາເຫດ ໃຫ້ລູກເພິ່ນຕາຍ ວ່າດັ່ງນັ້ນ. ວັນຫນຶ່ງ ເສດຖີເອີ້ນ ທ້າວ ໂຄສະກະ ມາຫາ ໂດຍໃຫ້ເອົາຈົດຫມາຍ ໄປສົ່ງໃຫ້ສ່ຽວເສດຖີ ຢູ່ນອກວຽງເມືອງ. ເນື້ອໃນ ຂອງຈົດຫມາຍບອກວ່າ ເມື່ອທ້າວໂຄສະກະ ຜູ້ຖືຈົດຫມາຍນີ້ມາຮອດ ຈົ່ງໃຫ້ເອົາຝັງທັງເປັນ ພ້ອມທັງໃຫ້ເອົາຄວາຍໄຖໃຫ້ຕາຍໄປແທ້ເນີ.

ພໍດີ ເມື່ອທ້າວໂຄສະກະ ຖືຈົດຫມາຍມາຮອດເຮືອນເສດຖີນອກວຽງ ເສດຖີຊ້ຳບໍ່ຢູ່ ຍັງຢູ່ແຕ່ລູກສາວ ແລະ ສາວໃຊ້. ທ້າວໂຄສະກະ ໄດ້ລາຍງານຈຸດປະສົງການມາ ຂອງທ້າວ ຕໍ່ ລູກສາວເສດຖີຮູ້ທຸກປະການ. ລູກສາວເສດຖີ ເລີຍບອກໃຫ້ກິນເຂົ້າກິນນ້ຳ ແລ້ວລໍຖ້າເພິ່ນ



ກັບມາແຕ່ທຸລະ. ນາງບອກໃຫ້ຄົນໃຊ້ ຫາພາເຂົ້າມາໃຫ້ກິນ ແລ້ວໃຫ້ທ້າວພັກຜ່ອນ ນອນຫລິ້ນຕາມສະບາຍໃນເປິງ. ຄວາມອິດເມື່ອຍ ຈາກການເດີນທາງໄກມາ ເຮັດໃຫ້ທ້າວນອນເຊືອບຫລັບໄປ. ເມື່ອນັ້ນ ສາວໃຊ້ທັງຫລາຍ ເຂົາກໍພາກັນມາຈອບເບິ່ງ ເຫັນຫນ້າຕາຂອງທ້າວສະງ່າງາມຍິ່ງຫນັກຫນາ ສົມຈະເປັນຄູ່ຄອງ ຂອງລູກສາວງາມຂອງພໍ່ເສດຖີ ຈຶ່ງຮີບໄປບອກໃຫ້ລູກສາວມາເບິ່ງ. ເມື່ອນາງມາເຫັນເຕັມຕາ ກໍຮູ້ສຶກຖືກໃຈຕົນ ແລະ ສົນໃຈວ່າ ເຂົາມາຫາພໍ່ຕົນ ມີທຸລະຫຍັງກັນແທ້ ພໍດີເຫັນຈົດຫມາຍຂອດຢູ່ແຈ່ງແຈຜ້າຂອງທ້າວ ນາງເລີຍຄ່ອຍເຄັ່ງ ອອກມາອ່ານເບິ່ງ. ພໍເມື່ອຊາບເນື້ອຄວາມແລ້ວ ນາງເລີຍຮູ້ສຶກສົງສານ ແລະ ຫ່ວງຈຶ່ງໄດ້ເອົາຈົດຫມາຍນັ້ນ ໄປຈູດໄຟຖິ້ມ ແລ້ວຂຽນເນື້ອຄວາມໃຫມ່ມາປ່ຽນ:

"ຄັນຖ້າທ້າວໂຄສະກະ ລູກຊາຍຂອງເຮົາມາຮອດແລ້ວ ໃຫ້ທາງພີ້ ຊ່ອຍຈັດການໃຫ້ເຂົາ ວິວາກັບລູກສາວຂອງທ່ານເຖີດ ພວກເຮົາຈະໄດ້ເປັນແກ່ວດອງທອງແຜ່ນດຽວກັນ."

ແລ້ວກໍເອົາຈົດຫມາຍນີ້ ໄປຂອດໄວ້ແຈ່ງຜ້າຂອງທ້າວ ເຫມືອນດັ່ງເກົ່າ.

ຕົກແລງມາ ເມື່ອພໍ່ເສດຖີແມ່ເສດຖີ ກັບມາແຕ່ທຸລະທາງອື່ນ ທ້າວກໍຮີບເຂົ້າສະແດງຄວາມເຄົາລົບ ແລ້ວກໍຍື່ນຫນັງສື ທີ່ຕົນຖືມານັ້ນໃຫ້. ເມື່ອພໍເສດຖີນອກວຽງ ອ່ານເນື້ອຄວາມນັ້ນແລ້ວ ກໍມີຄວາມຊົມຊື່ນ ຍິນດີ ຈຶ່ງຈັດການແຕ່ງງານວິວາ ໃຫ້ເປັນເຂີຍຕົນແຕ່ບັດນັ້ນມາ.



ຄວາມນີ້ ໄດ້ໄປຊອດຫູ ຂອງພໍ່ເສດຖີໃນເມືອງ ເຮັດໃຫ້ມີຄວາມເຈັບແຄ້ນແຫນ້ນໃຈເປັນອັນມາກ ຈຶ່ງຄິດຈະກຳຈັດທ້າວ ດ້ວຍນ້ຳມືຂອງຕົນເອງ. ມື້ຫນຶ່ງ ເພິ່ນໄດ້ມີຈົດຫມາຍສັ່ງໄປຫາທ້າວໂຄສະກະວ່າ ຂໍໃຫ້ເມືອເບິ່ງພໍ່ແດ່ ພໍ່ລົ້ມປ່ວຍຫນັກ. ເມື່ອໄດ້ຮັບຈົດຫມາຍແລ້ວທ້າວພ້ອມດ້ວຍເມັຽ ກໍພາກັນຮີບເມືອຢາມ. ພໍເມື່ອເຖິງ ທ້າວກັບເມັຽ ກໍເຂົ້າໄປໄຫວ້ ແລະ ບູຊາພໍ່ ທີ່ນອນຢູ່ໃນມ່ານກັ້ງ ແລ້ວກໍອອກມາໂອ້ລົມພັນເຕກັບຜູ້ຄົນ ທີ່ມາຢື້ຢາມ ຢ່າງມ່ວນຊື່ນບັນເທີງ, ພໍ່ເສດຖີ ທີ່ນອນຕາງຕີເຈັບຢູ່ ຍິ່ງຮູ້ສຶກເຈັບປວດຫົວໃຈ ຈຶ່ງກັ້ນໃຈຕາຍໂດຍທີ່ບໍ່ມີຜູ້ໃດຮູ້ເນື້ອແຕ່ປະການໃດເລີຍ.

ຕອນສວາຍມາຮອດ ເມື່ອອາຫານທ່ຽງພ້ອມທຸກຢ່າງແລ້ວ ລູກໃພ້ເລີຍເຂົ້າໄປເອີ້ນພໍ່ປູ່ເສດຖີມາກິນເຂົ້າ ແຕ່ເຫັນພໍ່ເສດຖີ ນອນຕາຍກະດ້າງຢູ່ແລ້ວ ນາງຈຶ່ງຊວາດຮູ້ເນື້ອວ່າ ເມື່ອພໍ່ປູ່

ເສດຖີຕາຍໄປແລ້ວ ເຂົ້າຂອງອັນມີຢູ່ແປດແສນໂກດນີ້ ຄວນຈະເປັນຂອງຜົວຂອງຕົນແຕ່ຜູ້ດຽວ ບໍ່ດັ່ງນັ້ນ ກໍຈະຕົກເປັນ ຂອງສາທາລະນະໄປຫມົດ. ນາງຈຶ່ງມາຂຽນຈົດຫມາຍນ້ອຍເຊື່ອງໄວ້ຫລືບຫມອນ ຂອງພໍ່ເສດຖີວ່າ: "ເມື່ອຂ້ອຍຈຸຕິຕາຍໄປແລ້ວ ເຂົ້າຂອງເງິນຄໍາອັນມີຢູ່ 8 ແສນໂກດນີ້ ຕົກເປັນຂອງທ້າວໂຄສະກະຜູ້ດຽວ." ເມື່ອແຕ່ງສໍາເລັດທຸກປະການແລ້ວ ນາງກໍຣີບອອກມາ ແຈ້ງບອກໃຫ້ຄົນທັງຫລາຍວ່າ:

"ຂ້ອຍເຂົ້າໄປສັ່ນຕີນຂອງພໍ່ ແຕ່ພໍ່ກໍບໍ່ຕື່ນ ແຂງກະດ້າງຢູ່ ພໍ່ເປັນຫຍັງໄປບໍ່ຮູ້."

ເມື່ອນັ້ນ ຜູ້ຄົນທັງຫລາຍ ເຂົາກໍເຂົ້າໄປເບິ່ງ ເຫັນເສດຖີຂາດໃຈຕາຍແຕ່ເທິງ ຈົນກະດ້າງ ແລະ ກໍພົບຫນັງສືນ້ອຍ ຢູ່ກ້ອງຫມອນບອກວ່າ ມອບເຂົ້າຂອງໃຫ້ທ້າວໂຄສະກະທັງຫມົດ. ງານຊາປະນະກິດສົບ ໄດ້ຮັບການຈັດຂຶ້ນ 7 ມື້ 7 ຄືນ ຢ່າງສົມກຽດ ແລ້ວທ້າວໂຄສະກະ ກໍສືບທອດຕະກຸນເສດຖີ ແຫ່ງເມືອງພະລານະສີ ຕັ້ງແຕ່ບັດນັ້ນເປັນຕົ້ນມາ ກໍມີເທົ່ານີ້ແລ.

# ສັບພະເຫຼວຫຼາກ

ຢັ້ງມີຊາຍຜູ້ຫນຶ່ງ ຊື່ວ່າສັບພະເຫຼວຫຼາກ ຂວານຖາກບໍ່ມີຫອນ ຈອນພອນບໍ່ມີທາງລາກ ດິນຈຳກົ້ນ ແຕ່ນັ້ນ ຊາຍສັບພະເຫຼວຫຼາກຜູ້ນັ້ນ ກໍໄປຟັນໄມ້ກາງດົງລຳປ່ຽວ ມາເຮັດຫນ້າ ຂາສັ້ນຄ່າວາ ມັນກໍເຫຼົາປືນໄດ້ເຕັມກຳເຫຼັ້ມຫນຶ່ງ ມັນກໍເບັດຊີ່ແລ້ວ ວາງໄວ້ເລົ່າໂງ ແລ້ວມັນກໍໄປຕັດເອົາປ່ານ ມາຝັ້ນເປັນສາຍ ປ່ານເປັ້ຽນັ້ນ ກົກມັນເທົ້າທໍລະນີພາຍລຸ່ມ ປາຍປົ່ງຂຶ້ນ ເມືອຟ້າຮອດພົມ ມັນກໍສິມໃຈທ້າວ ໃຈຍາວຂໍ້ຫຼໍ້ ມັນກໍຂາວເຫມືອນດັ່ງນຳ້ກ້ຽງ ດຳປີ້ດັ່ງປູນ ແຕ່ນັ້ນ ຍັງມີພະຍາພະລານະສີ ມີລູກສາວເຈັດຄົນ ຄືງຂາວງາມດັ່ງອິນລົງແຕ້ມ ພະຍາກໍປຸກຜາສາດ ໃຫ້ຄົນລະຫລັງ ເມືອງນັ້ນມີງົວໂພງຮ້າຍກິນຄົນບໍ່ຮູ້ຂາດ ແຕ່ນັ້ນຍັງມີທ້າວເຈັດຄົນອາສາ ພາກັນໄປຂ້າງົວໂພງ ເມື່ອມັນຕາຍແລ້ວ ພະຍາຈະມອບລູກສາວທັງເຈັດໃຫ້ຄົນລະຄົນ. ທ້າວທັງເຈັດພາກັນຖືຫອກຄົນລະດວງ ແລ້ວກໍໄປຫາງົວ ເມື່ອງົວມາບເຫັນ ທ້າວທັງເຈັດ ມັນກໍຫອບມາໃສ່ວ່າຈິຊິນ ທ້າວທັງເຈັດເຫັນດັ່ງນັ້ນ ກໍຢ້ານ ແລ້ວຮີບພາກັນ ແລ່ນເຂົ້າໄປລີ້ ຢູ່ໃນໂກນຂອນໄມ້ໄຮ ງົວເຫັນດັ່ງນັ້ນ ກໍຫລູບເຂົ້າສວາບກືນຂອນໄມ້ນັ້ນເຂົ້າໄປໃນທ້ອງ ພວກທ້າວທັງເຈັດ ເມື່ອເຂົ້າຢູ່ໃນທ້ອງງົວແລ້ວ ກໍພາກັນດັງໄຟຂຶ້ນ ຢູ່ໃນໂກນໄມ້ ທີ່ຢູ່ໃນປູມງົວ ງົວຮ້ອນທ້ອງ ກໍຮີບລົງໄປພູມນຳ້ ແຕ່ນັ້ນຍັງມີປາຊິວນ້ອຍໂຕຫນຶ່ງ ເຫັນງົວໂພງພູມນຳ້ຢູ່ ກໍລອຍມາສວາບກືນງົວຕົວນັ້ນໄປເສັ່ຽ ບໍ່ພໍ່ບຶດ ປາຊິວ ກໍຮ້ອນທ້ອງ ອິດອ່ອນ ແລ້ວກໍຟູຂຶ້ນມາ ນົກເຕັນປ່ອມມາບເຫັນ ກໍເລີຍບິນລິວລົງໄປສວາບກືນປາຊິວເຂົ້າໄປໃນທ້ອງ ນົກເຕັນຮ້ອນພິດໄຟ ກໍ ເລີຍບິນໄປຈັບຫລັກລີ່ຜີເສື້ອເຫງົາຢູ່ ເມື່ອຕື່ນເຊົ້າມາຜີເສື້ອໄປຢາມລີ່ ເຫັນນົກເຕັນເຫງົາຢູ່ ກໍເລີຍເອົາຄ້ອນຟາດນົກໂຕນັ້ນ ແລ້ວນຳໄປຖິ້ມໄວ້ໃນເຮືອນ. ພ້ອມນັ້ນ ຜີເສື້ອ ກໍຫລິກຂຶນກ້ຽງທັງຕົວຍັງຍ່າມຍະ ມັນກໍເອົາມີດນ້ອຍດວງໃຫຍ່ ມາປາດນົກໂຕນັ້ນ ເລີຍເຫັນປາຊິວ ມັນເລີຍປາດປາຊິວ ກໍເຫັນງົວໂພງ ມັນເລີຍປາດງົວໂພງ ກໍເຫັນຂອນໄມ້ ມັນເລີຍເອົາຂວານມາຜ່າຂອນໄມ້ ເລີຍພົບທ້າວທັງເຈັດ ແລ້ວມັນເລີຍເອົາຫອກງ້າວນຳທ້າວທັງເຈັດເມືອມ້ຽນໄວ້ ພ້ອມທັງທັກຂາເຂົາທັງເຈັດນັ້ນ ໃສ່ຂ້ອງຂອງມັນໄວ້. ສ່ວນທ້າວທັງເຈັດບໍ່ຕາຍທະລອນຢູ່ຫັ້ນແລ ແຕ່ນັ້ນຜີເສື້ອ ມັນກໍຫົວໃນແຂ້ວນຳເມັ່ຽມັນວ່າ ໂອນໍມັນທາກເປັນແຕ່ໂຊກເຮົາແລ້ວ ກາຳທ່ານມາເຖິງ ເຮົາຈິ່ງພາກັນກິນ ສູ່ວັນແລງເຊົ້າ ຄັນວ່າຫມົດຫມູ່ນີ້ ຍັງເຂົາເຈັດຄົນຢູ່ໃນຂ້ອງເຫຼັກໃຫຍ່. ສ່ວນພວກເຂົາເຈັດຄົນ ກໍໄດ້ຍິນ ຜີເສື້ອລົມຄວາມນີ້ຕໍ່ເມັ່ຽມັນ ພວກເຂົາກໍມີອັນຢ້ານຊົມຊື່ນຢູ່ທຸກຄົນ. ແຕ່ນັ້ນ ເຂົາເຈັດຄົນ ກໍເວົ້ານຳກັນບໍ່ປາກ ສູ່ຄົນສູ່ເວົ້ານຳກັນເລົ່າບໍ່ຕິງ ເມື່ອນັ້ນ ເຂົາຜູ້ຫນຶ່ງໃນເຈັດຄົນບໍ່ປາກເວົ້າຂຶ້ນວ່າ ກູກໍບໍ່ໄດ້ຍິນ ສຽງນົກອ້ຽງ

ຮ້ອງ ກິນຫມາກໂພໄຊ ແຊວໆສຽງບໍ່ມີໃຕຮ້ອງ ແຊວໆຮ້ອງໂຕດຽວຫມົດຫມູ່ ໂຕຢູ່ລຸ່ມກົ້ນຫນ້າກິນງ່າເທິງ ໂຕຢູ່ເທິງແທງນຫນ້າກິນງ່າລຸ່ມ ຕົວນ້ອງໃຫຍ່ກວ່າພີ່ ພີ່ສັບຕອດນ້ອງເລີຍບໍ່ຖືກຫນ່ວຍຕາ ຄັນວ່າກິນປູກິນປາເຂົ້າມາທາງກົ້ນ ຜູ້ຫນຶ່ງບໍ່ປາກວ່າ ຢາກໄດ້ຫນ້າພໍ່ຂ້ອຍມາຍິງເດນໍ ລືວ່າເຮົາທັງມວນກໍບໍ່ຕາຍດາຍດອກ ອັນວ່າ ຫນ້າພໍ່ເຈົ້ານ້ອຍໃຫຍ່ປານໃດນັ້ນເດສັງມາມີວາຈາຄຳຫານ ແລ່ນມາທັງຢ້ານແທ້ນໍ ແຕ່ນັ້ນ ຊາຍຜູ້ນັ້ນມັນກໍບໍ່ປາກກ່າວວ່າ ຫນ້າພໍ່ຂ້ອຍຊັ້ນຊື່ວ່າ ກາໍແພງ ແສນຄົນຂຶ້ນ ຂາດຽວກໍບໍ່ກິ່ງ ບາດວ່າພໍ່ຂ້ອຍຂຶ້ນມີຊ້າຍກໍເຫຼົ່າມາລາວກໍຈ້ອນຜ້າຂຶ້ນງ່າມກົ້ນ ປົກລ່າມຕາຕີນ ມັນກໍຫູຍທັງເຊີງ ລາກຂີ້ດິນຈ່ຳກົ້ນ ລາວກໍເຢາະຢ່ອງເຂົ້າ ສອງຄົນເປັນຜູ້ຫນຶ່ງ ຫມອບໆກົ້ມຫົວພົ້ນປ່າເລົາ ລາວກໍແນໃສ່ກົ້ນໄປຖືກກະບົງຕານົກພະເວີພະວາຕົກລົງມາຢູ່ເທິງປາຍໄມ້ ເຫຼັ້ມຫນຶ່ງຕົກໃສ່ນ້ຳດັງຊວ່າ ເຫຼັ້ມຫນຶ່ງຕົກໃສ່ປ່າເລົາປາ່ຄ່າດັງຖ່ວນ ເຫຼັ້ມຫນຶ່ງຕົກໃສ່ປ່າຫຍ້າປ້ອງດັງກ້ອງທົ່ວເມືອງ ມັນກໍດັງໄຟເທົ້າ ຈັກກະວານທັງສີ່ ຄວາມຫມູ່ນີ້ຈາແທ້ບໍ່ມີ ແຕ່ນັ້ນ ສຽງກໍເລີຍດັງເຂົ້າຮູປູ ຫູເຂົ້າຮູຂຽດ ຂຽດຕົວດຽວບຽດກັນພໍຮ້ອຍ ອັນວ່າດ້າມພ້າຂໍ້ ທ້າວຢັ່ງກໍຍັງເຖິງ ແມ່ນວ່າຫວາຍຊາວວາ ກໍບໍ່ເຖິງຖອງໄດ້ອັນວ່າຢູ່ໄກໆ ສັບພັນຍູເຫັນແຈ້ງ ແມ່ນວ່າຢູ່ໃກ້ໆ ຄົນແທ້ບໍ່ທ່ອນເຫັນ ມາຢາກໄດ້ຫມໍ້ພໍ່ຂ້ອຍມາແກງເດ ອັນວ່າຫມໍ້ພໍ່ເຈົ້ານ້ອຍໃຫຍ່ປານໃດ ໃຫ້ເຈົ້າຢ່າເອົາມາເບິ່ງ ໃຫ້ເຫັນດຽວນີ້ ອັນວ່າຫມໍ້ພໍ່ຂ້ອຍຫນ່ວຍນ້ອຍໆ ພອຍທໍ່ທໍລະນີ ແມ່ນວ່າປະທະຫວິງຫຼວງ ກໍບໍ່ພໍພຽງໄດ້ ແມ່ນວ່າເອົາມາຕົ້ມ ຟືນບໍ່ມີກໍຫາກເດືອດ ຝ່າຍຫນຶ່ງເຢັນ ຝ່າຍຫນຶ່ງຮ້ອນ ຝ່າຍຫນຶ່ງຟົດ ທະລວນທະລວນ ຝ່າຍຫນຶ່ງປາລອຍຫລິ້ນ ຝ່າຍຫນຶ່ງຄົນທັງຫລາຍຂີ່ເຮືອໄປຄ້າ ເດັກນ້ອຍຫລິ້ນຫມາກບ້າ ຢູ່ທ້ອງນາວາ ໂອນໍ ຢາກໄດ້ຈອງພໍ່ຂ້ອຍມາຕັກເດ ຈອງພໍ່ເຈົ້ານ້ອຍໃຫຍ່ປານໃດ ໃຜໂອດໂຕບໍ່ມີມາເອັ້ນ ເຈົ້ານີ້ ຫາກມາລວງ ອັນວ່າຈອງພໍ່ຂ້ອຍ ທໍ່ເຂົາສິເນໂຣຣາດ ຕັກບາດຫນຶ່ງໄດ້ບ້ານ ຊວ້ານບາດຫນຶ່ງໄດ້ເມືອງ ຕັກເປືອງໆ ໄດ້ຫົວຜີເສື້ອ ຄັນວ່າຈຸ່ມໄວ້ເຮື້ອ ຜີເສື້ອແຕກຫນີ ຫນີທັງຜີຫຸງຜີຮ່າ ຫນີທັງຜີປ່າຜີເມືອງ ຫນີທັງຜີຕາເຫລືອງຢູ່ແອບແອແຈບ້ານ ຫນີທັງຜີຂີ້ຄ້ານ ທ່ຽວຄວ່າກິນຄົນ ຫນີທັງຜີບິນບິນໄປທາງອາກາດ ນົກຂີ້ຖີ່ໂຕມີເຂົາກໍຫນີ ນົກເຄົ້າອັ່ນຂັນຄອນກໍຫນີ ຊອນລອນໄກ່ກະຕາກກໍຫນີ ຫມາຫອນເຫົ່າບໍ່ຫາຍາມກໍຫນີ ຜີເຄາະແລະຜີເຂັນກໍຫນີ ກູນີ້ຊື່ວ່າທ້າວທັງເຈັດ ສະເດັດໄປທາງອາກາດ ດູພິຣາດຮຸ່ງເຮືອງງາມແທ້ແລ.

ເມື່ອຜີເສື້ອສອງຜົວເມຽໄດ້ຍິນ ຄຳສົນທະນາຂອງທ້າວທັງເຈັດ ເລີຍມີຄວາມຢ້ານກົວຈຶ່ງພາກັນຜ່າຍຫນີທັນທີທັນໃດ ກໍມີໃນກາລະຄັ້ງນັ້ນແລ.

# ຂວານເກົ່າກູໄປ ເອົາຂວານເກົ່າກູມາ

ແຕ່ກີ້ແຕ່ກ່ອນ ຢູ່ທີ່ເມືອງພາລະນະສີ ຍັງມີກະດຸມພີດຄູ່ຫນຶ່ງເຮັດນາຫາລ້ຽງຊີບ ດ້ວຍຄວາມທຸກ ຄວາມລຳບາກຍາກເຍື້ອນ. ເຮືອນຂອງພວກເຂົາ ແມ່ນຕູບນ້ອຍມຸງຫຍ້າ ຕັ້ງຢູ່ຕິດກັບກຳແພງເຮືອນໂຮງຂອງເຈົ້າມະຫາເສດຖີ ຜູ້ມີເງິນນັບແສນໂກດ ຊຶ່ງຫາຜູ້ຈະປຽບປານບໍ່ໄດ້ເລີຍ. ວັນຫນຶ່ງ ກະດຸມພີດອັນວ່າ ພໍ່ນາສອງຜົວເມັຍ ຄຶດຢາກຈະຖາກແປງເຮືອນ້ອຍລຳຫນຶ່ງ ເພື່ອເອົາໄວ້ໄປຫາປາໃນບຶງ ໃກ້ໆກັບສະຖານທີ່ແຄມນາ ຂອງພວກເຂົາ. ແຕ່ທັງສອງເຂືອ ບໍ່ມີປັນຍາພໍຈະຫາເງິນມາຊື້ຂວານໄດ້ ຈຶ່ງຕົກລົງປົງໃຈໄປທູນເຈົ້າມະຫາເສດຖີວ່າ:

"ດູລາເຈົ້າພໍ່ມະຫາເສດຖີ ຜູ້ທີ່ມີສົມພານກວ້າງ ພວກຂ້ານ້ອຍກໍມາທຸກຍາກແທ້ ຢາກຂໍໃຫ້ເຈົ້າພໍ່ໂຜດທານ ໃຫ້ພວກຂ້ານ້ອຍຢືມຂວານແດ່ ຂ້ານ້ອຍທ້ອນ ເພື່ອພວກຂ້ານ້ອຍ ຈະໄດ້ເອົາໄປຖາກເຮືອນ້ອຍ ເປັນພາຫະນະຫາປູຫາປາ ກຸ້ງຫອຍກິນຕາມຫນອງ ພາຍຫນ້າເມືອພວກຂ້ານ້ອຍ ກໍຈະຂໍບໍ່ລືມບຸນລືມຄຸນພໍ່ພະອົງ ທີ່ມີຕໍ່ພວກຂ້ານ້ອຍເລີຍ."



ເມື່ອນັ້ນ ເສດຖີ ກໍບໍ່ມີຄວາມຫຍັງ ຈຶ່ງບອກໃຫ້ຄົນໃຊ້ຂອງຕົນ ມອບຂວານທອນໃຫ້ ແກ່ຊາວນາຄູ່ນັ້ນ. ເມື່ອໄດ້ຂວານແລ້ວ ສອງຜົວເມັຽ ກໍພາກັນເຂົ້າປ່າໄພສົນ ຈັດການປ່ຳໄມ້ຍາງຕົ້ນໜຶ່ງ ແລ້ວກໍມາຖາກແປງເຮືອ ດັ່ງປະສົງໄວ້ ຂະນະທີ່ຖາກຢູ່ນັ້ນ ຂວານເລີຍລ່ອນປິວໄປ ບໍ່ຮູ້ວ່າຕົກແຫ່ງໃດ. ຂາທັງສອງພາກັນຊອກໄປທຸກຍ່ອມຫຍ້າ ແຕ່ກໍບໍ່ໄດ້ພົບພໍ້ຂວານດັ່ງກ່າວນັ້ນເລີຍ. ເມື່ອຊອກໝົດແຮງແລ້ວ ທັງສອງ ກໍພາກັນມານັ່ງທຸກໂສກ ພ້ອມທັງຈົ່ມສ້າມ ກັບຄວາມອາພັບອັບເສົ້າຂອງຕົນເອງວ່າ:

"ໂອນໍ ທຸກປານໃດຍິ່ງຊ້ຳ ກຳແທ້ແຕ່ຊາດໃດນີ້ຈາ." ທັງສອງເປີກສາຫາລືກັນວ່າ ຈະໄປເອົາຂວານຊິໃດ ມາໃຊ້ພໍ່ເສດຖີ . ໃນທີ່ສຸດເຂົາກໍຕົກລົງປົງໃຈວ່າ ຈະໄປຫາຮັບຈ້າງລ້າງຖ້ວາຍລ້າງຊາມ ຕັກນ້ຳຕັກທ່າ ພໍໃຫ້ໄດ້ເງິນ ພໍຊື້ຂວານນັ້ນ. ຄຶດແລ້ວ ພວກເຂົາກໍຮີບເອົາຄວາມ ທີ່ຂວານເສັຽ ແລະ ວິທີຈີຫາມາໃຊ້ນັ້ນ ຂຶ້ນເມືອທູນເຈົ້າພໍ່ເສດຖີທັນທີ:

"ດູລາຂ້າໄຫວ້ເຈົ້າພໍ່ສົມພານ ພວກຂ້ານ້ອຍ ໄດ້ຢືມຂວານຂອງພໍ່ ໄປຖາກໄມ້ແປງເຮືອ ຂວານເລີຍລ່ອນໄປຕົກໃສບໍ່ຮູ້ ພວກຂ້ານ້ອຍຊອກໝົດມື້ ກໍບໍ່ເຫັນ ຈຶ່ງໄດ້ຂຶ້ນມາໄຫວ້ເຈົ້າພໍ່ ເພື່ອຂໍເວລາຈັກເຈັດວັນ ຈະໄປຮັບຈ້າງເອົາເງິນຊື້ດວງໃຫມ່ມາຖວາຍພໍ່ເສດຖີ ຂໍແຕ່ພໍ່ເສດຖີກູນາໂຜດຂ້ານ້ອຍທັງສອງແດ່ທ້ອນ."



ເມື່ອເສດຖີໄດ້ຍິນຄວາມນີ້ອອກມາ ເຂົາກໍຫົວຄະລຶກໃນຄໍ ເພາະເຫັນຕາກິນງາມມາຮອດແລ້ວ ແຈ້ວໆໄຊກແລ່ນມາເຖິງ. ເຂົາເວົ້າຂຶ້ນທັນທີວ່າ:

"ຂວານດວງນີ້ ແມ່ນຂວານຄໍ້າຂວານຄູນ ບໍ່ມີເງິນຄ່າຄໍາແສນໃດຈິມາແທນໄດ້ ຂວານເກົ່ານັ້ນເສັງ ກໍເອົາຂວານເກົ່າຄືນມາ."

ສອງຜົວເມັຽຫລຽວເບິ່ງຫນ້າກັນ ດ້ວຍຄວາມເສົ້າໂສກອາພັບ ແລ້ວກໍພາກັນວິ່ງວອນເສດຖີ ໃຫ້ອິນດູກູນາອີກ ແຕ່ເສດຖີ ກໍຍັງຢືນຢັນຄວາມເກົ່າ ຄືຂວານເກົ່າກູເສັງ ເອົາຂວານເກົ່າກູຄືນມາ. ເມື່ອວິ່ງວອນແນວໃດກໍບໍ່ໄດ້ ແລ້ວສອງຜົວເມັຽ ກໍເລີຍຂາບລາມາເຮືອນ.

ຕົກມື້ໃຫມ່ມາ ຂາສອງຜົວເມັຽ ກໍຮີບພາກັນໄປຊອກຫາຂວານເຈົ້າກໍານັ້ນອີກ ພວກເຂົາຊອກອອກໄປໄກຈາກບ່ອນເກົ່າ ຮອດພຸ່ມໄມ້ແຫ່ງຫນຶ່ງ ເລີຍເຫັນກວາງຖືກເຂົາຕູ້ມເຂົາໂຫມ ນອນຕາຍຢູ່ພຸ່ມໄມ້ຫັ້ນ ສອງຜົວເມັຽ ເອົາກັນມາຄົວເອົາຊີ້ນກວາງ ພ້ອມດ້ວຍຫນັງແລະ ເຂົາ ໂຫມທັນທີ ເພື່ອຈະໄປຂາຍເອົາເງິນເມືອຖວາຍພໍ່ໃຫຍ່ເສດຖີ. ນຶກວ່າ ບາງທີເພິ່ນອາດຈະອິນດູກູນາອີກບໍ່ຮູ້. ພໍສອງຜົວເມັຽ ຄົວເຂົ້າໄປໃນທ້ອງກວາງ ກໍເລີຍເຫັນຂວານ ທີ່ລ່ອນສະເດັນໄປນັ້ນ ຝັງຢູ່ໃນທ້ອງຂອງກວາງ ເຮັດໃຫ້ສອງຜົວເມັຽ ມີຄວາມປີ້ມປິຕິຊຶມຊື່ນຫາທີ່ສຸດທີ່ຍັງບໍ່ໄດ້. ພວກເຂົາ ຈັດການເອົາເຄື່ອງທ້ອງຂອງໃນມາປີ້ງ ກິນເຂົ້າໃຫ້ອີ່ມດີພີມັນ



ສົມໃຈມັກແລ້ວ ກໍພາກັນຫາບເອົາຊີ້ນກວາງ ພ້ອມດ້ວຍຂວານເກົ່າດວງນັ້ນ ກັບຄືນເມືອບ້ານແຫ່ງເຂົາ. ເມື່ອເຖິງບ້ານແລ້ວ ພວກເຂົາກໍເອົາຂາຫລັງຂອງກວາງຂາຫນຶ່ງ ພ້ອມດ້ວຍຂວານເກົ່ານັ້ນ ເມືອ ຖວາຍພໍ່ເສດຖີ ເຊິ່ງເພິ່ນກໍສະແດງຄວາມຊົມຊື່ນຍິນດີດອມເປັນອັນມາກ ເພິ່ນເວົ້າກັບກະດູມພິດທັງສອງວ່າ: "ຄັນຖ້າມື້ຫນ້າມື້ຫລັງ ເຂືອທັງສອງມີທຸລະຕ້ອງ **ການຂວານ ກໍໃຫ້ມາຢືມເອົາໄປ ພໍ່ກໍຈະບໍ່ຂືນດອກເນີ."**

ຄ້ອມເວົ້າແລ້ວ ຜົວເມັຽຊາວນາ ກໍຂາບອຳລາຈາກໄປ. ຂະນະນັ້ນ ຍັງມີພໍ່ຄ້າໃຫຍ່ເດີນສະເພົາມາແຕ່ທາງທິດບິວລະພາ ຫາຊື້ເຂົາກວາງໂທມ ເພື່ອເອົາໄປປຸງຢາອາຍຸວັດທະນະໃຫ້ແກ່ກະສັດຂອງພວກເຂົາ ກໍພໍດີສອງຜົວເມັຽໄດ້ໂອກາດ ກໍເລີຍຂາຍໃຫ້ພໍ່ຄ້ານັ້ນໄປ ໄດ້ເງິນຄຳເຂົ້າຂອງມາກມາຍ ເຮັດໃຫ້ຊີວິດຂອງເຂືອຮຸ່ງໃສເປັນດີຂຶ້ນ ແລະ ຖານະຫນ້າຕາກໍດີສົດໃສຂຶ້ນຕາມມາ.

ມາວັນຫນຶ່ງ ເຈົ້າພໍ່ເສດຖີ ມີອາການອິດເຫມື່ອຍ ເລີຍໄປຮຽກຫມໍມາວາງຢາໃຫ້ ຫມໍກໍເລີຍເອົາຢາມາໃຫ້ມັດຫນຶ່ງ ພ້ອມທັງສັ່ງໄວ້ວ່າ ໃຫ້ໄປຫາຫມໍ້ດິນມາຕົ້ມຢາ ຈຶ່ງຈະສັກສິດ.

ເຈົ້າພໍ່ເສດຖີຈົນປັນຍາ ເພາະຈະຫາຫມໍ້ດິນຢູ່ໃນເຮືອນໂຮງກໍບໍ່ມີ ຈຶ່ງຄຶດຫາແຕ່ສອງຜົວເມັຽຊາວນາ ຢູ່ແຄມກຳແພງເຮືອນທັ້ນ ເຂົາຈຶ່ງໃຫ້ຄົນໃຊ້ໄປຖາມເບິ່ງ ຫລອນທໍ່ເຂົາມີກໍໃຫ້ຢືມມາເລີຍ.



ເມື່ອໄດ້ຮັບຄຳສັ່ງແລ້ວ ຄົນໃຊ້ກໍຮີບອອກໄປຫາເຮືອນກະດຸມພິດທັງສອງ ແລະ ເວົ້າຕໍ່ຂາວ່າ:

"ຫລອນວ່າ ອີນ້າທັງສອງມີຫມໍ້ດິນບໍ່ຮູ້ ພໍ່ເສດຖີ ເພິ່ນບອກຂ້ອຍ ມາຢືມເມືອຕົ້ມຢາ ເພິ່ນຮູ້ສຶກເຫມື່ອຍຕົນເຫມື່ອຍໂຕຫລາຍວ່າຊັ້ນ ຖ້າອາວອາມີ ກໍຊ່ອຍເພິ່ນແດ່ ແລ້ວສອງສາມວັນ ກໍຈິເອົາມາສົ່ງ."

ຊາວນາສອງຜົວເມັຽ ກໍບໍ່ຂືນ ຈຶ່ງເອົາຫມໍ້ໃຫ້ສາວໃຊ້ເສດຖີເມືອ. ຕົກມື້ລຸນມາ ສາວໃຊ້ຜູ້ເກົ່າ ກໍກັບຄືນມາຫາຂາທັງສອງອີກ ພ້ອມທັງຄອບວ່າ:

"ອາວອາເຮີຍ ເພິ່ນບອກໃຫ້ຂ້ອຍມາຄອບວ່າ ຫມໍ້ທີ່ຢືມເມືອນັ້ນ ແມວເຕັ້ນໃສ່ແຕກແລ້ວ ເພິ່ນວ່າ ເຈົ້າຈິເອົາທີ່ໃດນໍ ເພິ່ນກໍຈິເອົາໃຫ້ ວ່າຊັ້ນ ຂໍໃຫ້ອາວອາຄາດຄ່າໃຫ້ເພິ່ນແດ່."

ສອງຜົວເມັຽ ຊວາດຮູ້ເມື່ອ ເວລາຕົນຢືມຂວານ ເວລາຂວານເສັຽ ພວກເຂົາໄດ້ເມືອອ້ອນວອນແນວໃດ ກໍບໍ່ກູນາ ມາບັດນີ້ ແມ່ນຮອບຕົນແລ້ວ ຈຶ່ງເວົ້າກັບສາວໃຊ້ວ່າ: "ໂທຕາຍແລ້ວ ຫມໍ້ອັນນັ້ນ ແມ່ນຫມໍ້ມູນຫມໍ້ມັງ ຮັກສາມາໄວ້ຕັ້ງແຕ່ອີປູ່ອີປູ່ພຸ້ນ ສັງຈິມາເສັຽຍາມນີ້ ຫມໍ້ອັນນີ້ ຫາລາຄາຫມື່ນຄຳແສນບໍ່ໄດ້ແລ້ວ ຫມໍ້ເກົ່າເສັຽ ກໍໃຫ້ເອົາຫມໍ້ເກົ່ານັ້ນຄືນມາ." ສາວໃຊ້ໄດ້ນຳຄຳນີ້ ເມືອຖວາຍເຈົ້າພໍ່ມະຫາເສດຖີ ຕາມທີ່ກະດຸມພິດທັງສອງເວົ້າມານັ້ນ ເສດຖີໄດ້ໃຫ້ສາວໃຊ້ ມາຂໍວີ່ງວອນຫລາຍຄັ້ງຫລາຍທີນວ່າ ຈະຂໍເອົາຫມໍ້ຫນ່ວຍອື່ນໃຊ້ແທນ ແຖມຍັງຈະເອົາ ສິນບັດເຂົ້າຂອງໃຫ້ຫລວງຫລາຍ ເປັນການສົມມະນາບຸນຄຸນ ແຕ່ຝ່າຍຊາວນາສອງຜົວເມັຽ ກໍຍັງຢືນຢັນຄວາມເກົ່າຢູ່ວ່າ:

" ຫມໍ້ເກົ່າກູແຕກ ເອົາຫມໍ້ເກົ່າກູມາ."

ເຈົ້າພໍ່ເສດຖີ ຜູ້ມີເຂົ້າຂອງເງິນຄຳຮອດສິບແປດໂກດ ກໍບໍ່ສາມາດແກ້ໄຂຂໍ້ນີ້ໄດ້ເລີຍ ເພາະບໍ່ສາມາດ ຈະຫາຫມໍ້ເກົ່ານັ້ນ ກັບຄືນມາໄດ້. ໃນທີ່ສຸດ ຄວາມກໍບໍ່ແລ້ວ ແຮ້ວກໍບໍ່ລົ້ນ ພວກເຂົາທັງສອງຄອບຄົວ ຈຶ່ງພາກັນຂຶ້ນໄປເວົ້າຄວາມ ກັບມະໂຫສົດ. ເມື່ອມະໂຫສົດ ສືບຫາຕົ້ນສາຍປາຍເຫດ ຂອງຂໍ້ພິພາດ ລະຫວ່າງກັນວ່າ ມີຕົ້ນສາຍປາຍເຫດແນວໃດແລ້ວ ມະໂຫສົດກໍສະເຫນີຂໍ້ແກ້ຫລາຍປະການ ແຕ່ກະດຸມພິດທັງສອງ ກໍບໍ່ຍອມເອົາ ແມ່ນຈິເອົາເຂົ້າຂອງມາໃຫ້ທໍ່ໃດ ກໍບໍ່ຍອມທັ້ນແລ. ແຕ່ນັ້ນ ມະໂຫສົດຜູ້ພຽບພ້ອມດ້ວຍປັນຍາ ກໍມາຕຶກຕອງເອົາຄວາມຄຶດວ່າ ຈະແກ້ແນວໃດ ຈຶ່ງຈະໄດ້ບົວບໍ່ໃຫ້ຊ້ຳນ້ຳບໍ່ໃຫ້ຂຸ່ນ. ຄືນຫນຶ່ງຜ່ານໄປ ຕົກມື້ໃຫມ່ມາ ທ່ານກໍຮຽກເສດຖີ ແລະ ກະດຸມພິດຜົວເມັຽ ມາຫາ ແລ້ວກໍຖາມວ່າ:

"ດູລາ ທ່ານເຈົ້າມະຫາເສດຖີ ແລະ ກະດຸມພິດ ມີລູກເຕົ້າເປັນຍິງເປັນຊາຍສັນໃດຈາ"

ເສດຖີກໍຕອບຕາມຊື່ວ່າ ມີລູກຊາຍຂຶ້ນບ່າວ ອາຍຸໄດ້ສິບແປດປີພໍດີ. ສ່ວນກະດຸມພິດ

ກໍຕອບວ່າ ມີລູກຍິງ ອາຍຸເຂົ້າສິບທົກປີພໍດີ. ເມື່ອຊາບດັ່ງນັ້ນແລ້ວ ມະໂຫສົດ ຈຶ່ງສະເໜີໃຫ້ທັງສອງຄອບຄົວ ເປັນທອງແຜ່ນດຽວກັນ ຄື ເປັນແກ່ວເປັນດອງກັນ ໃຫ້ລູກຊາຍຂອງມະຫາເສດຖີ ເອົາລູກສາວ ຂອງກະດຸມພີດເປັນເມັຽ ແລ້ວໃຫ້ເສດຖີ ແບ່ງສິນບັດທ່ອງໜຶ່ງ ມາໃຫ້ສອງເຊືອລູກເຕົ້າສືບສ້າງຕໍ່ ເມືອພາຍໜ້າ.

ເມື່ອເສດຖີ ແລະ ກະດຸມພີດ ຟັງຄໍາສະເໜີນີ້ແລ້ວ ທຸກຄົນ ກໍມີຄວາມຍິນດີ ຮັບເອົາຄໍາຕັດສິນ ຂອງມະໂຫສົດທຸກປະການ ຄວາມຂຸ່ນໝອງໃຈ ຄວາມຈ່ອງກໍາຈ່ອງເວນກັນ ລະຫວ່າງເສດຖີ ແລະ ກະດຸມພີດ ຈຶ່ງສິ້ງສຸດໃນວັນນັ້ນ ສອງຄອບຄົວ ໄດ້ກັບກາຍມາເປັນຄອບຄົວທອງແຜ່ນດຽວ ມີຄວາມສາມັກຄີ ແລະ ມີຄວາມສຸກສູ່ຄົນ ຕັ້ງແຕ່ບັດນັ້ນມາກໍມີແລ.



# ສີສິດທິມັງຄະລະຄາຖາ
# ຫລື
# ຍອດຄຳສອນແຫ່ງສຽວສະຫວາດ

ສີສິດທິມັງຄະລະຄາບັງ ຍອດຄຳສອນແຫ່ງສຽວສະຫວາດ ນັກປາດເຈົ້າບອກໄວ້ວ່າ ຟັງເຍີ ຟັງຄຳບູຮານທ່ານສອນສັ່ງໄວ້ ພໍໃຫ້ເປັນໄມ້ໄຕ່ຍໍ່ຍອງທາງ ແມ່ນທຳການອັນໃດ ກໍບໍ່ທ່ອນຖອຍຈາກຄວາມພຽນ ຄວາມຄະລຳ ເອົາສິນທັມເປັນເຄົ້າ ເຖົ້າແກ່ໄດ້ກ່າວໄວ້ວ່າ ສິນນີ້ຄວນແກ່ຄຳແສນ ເຊັ່ນວ່າ ຜົວຢຳເມັຽ ເມັຽຢຳຜົວ ສິດຢຳຄູ ຄູຢຳສິດ ລູກຢຳພໍ່ແມ່ເຖົ້າແກ່ ແລະ ລຸງຕາ ດັ່ງນີ້ ກໍຈຶ່ງດີທັ້ນແລ ອັນນີ້ເພິ່ນຮຽກວ່າ: "ຢຳຜີເຖົ້າ ຢຳເຈົ້າຍືນ" ຊຶ່ງນັບວ່າ ເປັນກົກເຄົ້າແຫ່ງຄຳສອນທັ້ນແລ.

- ບຸກຄະລະຍິງຊາຍໃຫຍ່ນ້ອຍ ຝູງໃດກໍດີ ເມື່ອໄດ້ຮູ້ໄດ້ຍິນ ຖ້ອຍຄຳອັນໃດກໍດີ ໃຫ້ໄດ້ຟັງດ້ວຍຫູໃຫ້ດູແກ່ຕາ ໃຫ້ພິຈາລະນາດ້ວຍໃຈຕົນ ຢ່າງຖ່ອງແທ້ ອັນນີ້ເພິ່ນຮຽກວ່າ:

"ໃຫ້ຟັງດ້ວຍຫູ ໃຫ້ດູດ້ວຍຕາ ລັກຂະນາໃນໃຈ"

ຖ້າບໍ່ດັ່ງນັ້ນ ຈະເປັນເຫມືອນ "ກະຕ່າຍຕື່ນຫມາກຕູມ" ອັນພາໃຫ້ ຝູງສັດສາວາສິ່ງນ້ອຍໃຫຍ່ ແລ່ນໄປສູ່ຄວາມຕາຍ ທີ່ແມ່ຖຸງຄາທັ້ນແລ. ດີທີ່ມີນັກປາດ ຣາຊະສີ ມາຊ່ອຍແກ້ທັນເວລາ ຝູງເຂົາພວກນັ້ນ ຈຶ່ງສາມາດພົ້ນຈາກອັນຕາຍໄດ້.

- ອັນຫນຶ່ງເຊືອກສາມວາ ຢ່າສະຫາວ ວ່າຈະເອົາໄປຄ້ອງຊ້າງ ຢ່າອວດອ້າງ ວ່າໂຕດີຫລາຍ ຄັນວ່າເຈົ້າໄດ້ເປັນໃຫຍ່ແລ້ວກໍດີ ເປັນນັກປາດກໍດີ ມີເຂົ້າຂອງເງິນຄຳຫລາຍໂກດແລ້ວກໍດີ ກໍຢ່າອວດອ້າງ ວ່າແຕ່ໂຕດີຫລາຍ ມັນຈະເປັນດັ່ງ ພະຍາຣາຊະສີ ຜູ້ມີລິດເດດອວດວ່າໂຕເກັ່ງກ້າສາມາດ ບໍ່ມີຜູ້ຫຽມທັນ ຝູງສັບພະສັດໃນສິງສານ ບໍ່ມີໃຜເທົ້າ ຈຶ່ງເອົາຕົວກະໂດດເຂົ້າ ວ່າຈະມອດຫມາໄນ ຫມາເລີຍໃຊ້ພິກໄຫວ ໃຊ້ກົນຫລອກລໍ້ ຣາຊະສີບໍ່ທໍ້ ທະຍານໃສ່ຫມົດແຮງ ຫມາຈອກພິກໂຕແຄງຫລົບແຮງກະແທກ ຣາຊະສີຫົວແຕກຕຳໃສ່ຫີນຜາຕາຍໄປ ກໍມີໃນຄັ້ງນັ້ນທັ້ນແລ.

ອັນນີ້ ເພິ່ນຮຽກວ່າ "ສັນບໍ່ແພ້ຄົມ"

- ອັນໜຶ່ງ ຄຳພີບໍ່ມີຄຳປອງ ຍ້ອງແຕ່ວ່າໂຕດີ ບໍ່ເປັນ. ບຸກຄະລະຍິງຊາຍນ້ອຍໃຫຍ່ຜູ້ໃດກໍດີ ຢ່າໄດ້ລ່ວງປະຫັດບ້ານເມືອງ ໃຫ້ຄ່ອຍຟັງຄຳເຖົ້າແກ່ນັກປາດ ຜູ້ຮູ້ເພິ່ນສອນທັ້ນເທີ້ນ. ໃຫ້ເຈົ້າເຕົ້າພີ່ນ້ອງ ຝູງເພື່ອນສະຫາຍແພງທັ້ນເຖີດ ເປັນພີ່ໃຫ້ປັນນ້ອງ ເປັນນ້ອງໃຫ້ປັນພີ່. ອັນວ່າພີ່ນ້ອງນີ້ຕັດກັນບໍ່ຂາດ.

ເພິ່ນເອີ້ນວ່າ: "ເສືອໄດ້ກິນເນື້ອ ເພື່ອປ່າມີໜາມ ນ້ຳມາໄຫຼມາ ປາຈິ່ງຂຶ້ນໄຮ່ "

- ອັນໜຶ່ງ "ມັກຫລິ້ນ-ເສັຽຄຳຮູ້ ມັກຫລິ້ນຊູ້-ເສັຍຫລັກ ມັກທ່ຽວຍາມ-ເສັຽຂອງຝາກ ມັກປາກ-ເສັຽຄຳຜິດ" ຍ່ອມເປັນໂທດ ຢ່າກົ້ວໂກດສະຫາວ ຄວາມບໍ່ດີ ຢ່າສະຫງວນຫລິ້ນໝາກຣຸກໝາກສະກາ ຫລິ້ນເບັ້ຽເຈັ້ຽໄພ້ ຖີ້ມກ້ອນຢ້ອນໄມ້ຕີຄີຝູງນີ້ບໍ່ດີ ແມ່ນວ່າມີເຂົ້າຂອງສິນບັດ ດັ່ງນ້ຳມະຫາສະໝຸດ ກໍຈະຈິບຫາຍເສັຽສັ້ຽງ ແມ່ນມີເມັ້ຽກໍຈັກຮ້າງ ແມ່ນວ່າເປັນເຈົ້າຊ້າງຈັກໄດ້ຍ່າງທາງຕີນ ເໝືອນດັ່ງ ເສດຖີສອງຜົວເມັ້ຽປາງກ່ອນ ບໍ່ຢ້ານຍ່ອນໃຈໃຜ ແມ່ນວ່າຫິວຊີ່ງໃດກໍທັ້ຽນຮາກ ຕາຍຢາກເຂົ້າຈິບຫາຍ ປາກຫາສັດຈະບໍ່ໄດ້ ຜູ້ຄົນທຸກປະເທດໄຫ້ດູມິ່ນດູແຄນແທ້ແລ.

- ອັນ "ຄວາມດີ ຍ່ອມຊະນະຄວາມຮ້າຍ ພີ່ວ່າຄວາມຮ້າຍນີ້ ດ່າພີ່ກໍເຈັບທ້ອງ ດ່ານ້ອງກໍເຈັບໃຈ" ເປັນພີ່ໃຫ້ເບິ່ງນ້ອງ ເປັນນ້ອງໃຫ້ເບິ່ງພີ່ທັ້ນເທີ້ນ. ປະການໜຶ່ງ ຢູ່ໃກ້ກັນ ຢ່າຕິສິນນິນທາກັນ ຢ່າກ່າວສຽດບຽດໃຈກັນ ຄັນເພື່ອນຮູ້ພາຍຫລັງ ກໍຈະກໍ່ຄວາມຈິບຫາຍ ດ້ວຍໄພຕ່າງໆທັ້ນແລ. ດູລາທ່ານທັງຫລາຍຈິ່ງຮັກສາ ກາຍະກຳ ວະຈີກຳໃຫ້ດີ ມີພີ່ນ້ອງຫລວງຫລາຍ, ເພິ່ນວ່າ "ສີດັ່ງນ້ຳຕາອອກ ສີຕານ້ຳດັ່ງອອກ" ໄດ້ວ່າເປັນພີ່ນ້ອງແລ້ວ ຕັດກັນບໍ່ໄດ້ທັ້ນແລ.

- ອັນໜຶ່ງ "ທ່ານບໍ່ເອົາຄວາມໂຕ ຢ່າໄປບອກ ບອກກໍຫາກເສັຽແຮງ ແປງກໍຫາກແປງເປົ່າ ບໍ່ຕາຍກໍຫາກເໝົ່າ" ເປັນດັ່ງຄຳພະພຸດທະເຈົ້າ ເທດສະໜາແທ້ດີຫລີ.

- ອັນໜຶ່ງ "ເຮັດອັນໃດ ໃສ່ໃຈອັນນັ້ນ" ຢ່າເຮັດດັ່ງໝາຈິ້ງຈອກ ເຫັນຊີ້ນມັກຊີ້ນ ເຫັນປາມັກປາ ຈິ່ງໂລພາກິນຫລາຍ ທ້ອງແຕກກໍມີໃນວັນນັ້ນແລ.

- ອັນໜຶ່ງ "ເກີດເປັນຄົນ ໃຫຍ່ມາໃຫ້ຮຽນຄຳຮູ້ ຢ່າຢູ່ດຽວດາຍ ຢ່າຍໍແຂນກາຍຕໍ່ໜ້າທ່ານ ຢ່າດະປາກໃຫ້ທ່ານ ຫລຽວຫລັງບໍ່ດີ ຄັນຈັກໄປທາງໃດ ໃຫ້ຄຶດດູໃຫ້ຖີ່" ຄັນວ່າ ໄປດີກວ່າຢູ່ ຈິ່ງໄປເທີ້ນ. ປະການໜຶ່ງ ຢູ່ກໍໃຫ້ມີໄຊ ໄປກໍໃຫ້ມີໂຊກ ໃຫ້ຖືກໂຍກມ້າຢູ່ເທິງອານກໍຫາກຈັກມີເຄື່ອງອາລັງການຂອງຝາກ ລູກຫລານຫາກຍິນດີ ອັນວ່າອາລະຊີ ບໍ່ຟັງຄຳທ່ານເໝືອນດັ່ງຊາວເມືອງມ່ານ ແລະ ຊາວເມືອງໂກສຳພີ ເຂົາກໍຣາຄີຣົບເລວກັນບໍ່ແລ້ວ.

- ອັນຫນຶ່ງ "ເມື່ອທ່ຽວໄປມາ ຂຶ້ນເຮືອນລົງລ່າງ ໃຫ້ກະທຳດັ່ງຂະນີ ແລະ ຄ່າງ ລຸກຍ່າງ ຍ້າຍຫຼຽວເບິ່ງເສືອຫມີ ຄັນຈັກລຸກຫນີໃຫ້ຫຼຽວຫຼັງ 3 ເທື່ອ."

- ອັນຫນຶ່ງ "ໃຜຜູ້ເຮັດຊັກຊ້າ ນຶກຢູ່ໃນໃຈບໍ່ດີ."

ຍັງມີເສດຖີຜູ້ຫນຶ່ງ ໄປໂອມສາວໃຫ້ລູກຊາຍ ເຫິງນານຫລາຍເລີຍລືມໄປແລ້ວ ພໍ່ແມ່ສາວເລີຍຍົກໃຫ້ຊາຍອື່ນ ເພາະກາຍຂອບເຂດນັດຫມາຍ ດູລາເຈົ້າທັງຫລາຍ ຄັນຈັກກະທຳອັນໃດ ໃຫ້ຈື່ຈຳເອົາໄວ້.

- ອັນຫນຶ່ງ "ຄັນວ່າໄວປາກເສັຽສິນ ໄວຕີນໄວມືຕົກກົກໄມ້" ປຽບດັ່ງນົກໄສ່ ແລະ ນົກຂີ້ຖີ່ ປາງກ່ອນ ມາຈັບຢູ່ຕົ້ນໄມ້ ໃກ້ບ້ານນາຍພານ ອວດວ່າໂຕນັ້ນຫານ ຈັບລົງມາຕ່ຳ ນາຍພານເລີຍຈອບໄປຍິງເອົາມາຊຳ້ ອັນບໍ່ຕ່າງຫຍັງກັບຄົນເຮົາ ໄປລອນໆເທົ່າ ແລ້ວມັນກໍຕອດຕາຍ.

- ອັນຫນຶ່ງ "ຖິ້ມນ້ຳລາຍ ໃຫ້ຫຼຽວຫາປ່ອງ ນັ່ງຍ່ອງຍໍ້ ໃຫ້ເບິ່ງຫົນທາງ" ລາງເທື່ອມີອົນຕາຍມາບຽດ.

- ອັນຫນຶ່ງ "ນຸ່ງເສື້ອຜ້າ ຢ່າໃຫ້ຊ່ອງພະເນດ ແຫ່ງທ້າວພະຍາ" ເພິ່ນຈັກມີໂທດທາ ຂ້າເສັຽຕາຍເປົ່າ.

- ອັນຫນຶ່ງ "ຢ່າຍ້າຍຄັນນາ ປະຕູເຮືອນ ແລະ ປະຕູບ້ານເກົ່າ ຢ່າຖິ້ມນ້ຳອອກບໍ່ ຢ່າຂຸດຈູມປອກໄປຖິ້ມນອກຫມູ່ ຢ່າປຸກເຮືອນກວມທາງເກົ່າ" ນັກປາດເຈົ້າເວົ້າວ່າເຂັດຂວງ.

- ອັນຫນຶ່ງ "ເພື່ອແຜ່ຫລາຍຕາຍໂຕຜູ້ດຽວ" ເປັນດັ່ງປາງພະຍາມານ ມາເລວພະເຈົ້ານັ່ງເຄົ້າເມົ້າຢູ່ອົງດຽວ ເທບພະດາ ອິນພົມຫນີຈາກ ຍັງແຕ່ນາງນາດນ້ອຍ ຊື່ວ່າທໍລະນີ ກັບທັງປັນຍາປາຣະມີ ສາມສິບທັດ ມາກຳຈັດມານຫນີຈາກ.

- ອັນຫນຶ່ງ "ເພິ່ງຈາ ແລະ ບໍ່ເພິ່ງຈາລັກຂະນາໃນໃຈຮູ້ແລ້ວຢ່າເນີ໌ງ" ອັນເກີດເປັນຄົນບໍ່ຄວນກ່າວຄຳຫຍາບຊ້າກ້າແຂງ ບໍ່ຄວນວ່າຢ່າວ່າ ບໍ່ຄວນເວົ້າຢ່າເວົ້າ.

- ອັນຫນຶ່ງ "ເປັນເຈົ້າໃຫ້ຮັກໄພ່ທັງຫລາຍ ເປັນນາຍໃຫ້ຮັກຫມູ່ ເປັນປູ່ໃຫ້ຮັກຫລານ ເປັນກວານໃຫ້ຮັກລູກບ້ານ ກ່ອນຈະຕ້ານໃຫ້ຄ່ອຍພຽນຈາ ຄັນວ່າລ້ຽງຫມູຫມາງົວຄວາຍ ຊ້າງມ້າ ໃຫ້ຈຽມແຂ້ວ ແລະ ເຂົາ" ຄັນພະສົງກາຍມາ ໃຫ້ຫລີກໃຫ້ເວັ້ນ ຄັນວ່າເວັ້ນບໍ່ໄດ້ ໃຫ້ຄ່ອຍຫມອບລົງ.

- ອັນຫນຶ່ງ "ເປັນຄົນຊາຍ ໃຫ້ຮຽນຄຳຮູ້ ມັກຫລິ້ນຊູ້ ໃຫ້ຄ່ອຍພຽນຈາ ມັກກິນນານ ໃຫ້ ພຽນຂອງຝາກ ຢາກກໍຢ່າຢາກຫລາຍ ຕົວຈິຕາຍມື້ໃດບໍ່ຮູ້."

- ອັນຫນຶ່ງ "ຢາກຮູ້ຢ່ານອນຫລັບ ຢາກເຫັນໃຫ້ໄປທ່ຽວ ສ່ຽວຮັກໃຫ້ໄປຫາ" ກູ້ເງິນຄຳ ຈົ່ງຈຳຈື່ໄວ້ ເປັນໄມ້ໄຕ້ຍວງຊ່ອງຫີນທາງ ເປັນຄົນໃນສິງສານໃຫ້ມີໃຈຫວານ ພຽນກິນທານ ຝູງເປັນມານ ຢ່າໃຫ້ມາຕ້ອງ ຄັນວ່າເປັນພີ່ນ້ອງ ໃຫ້ແມ່ນໃຈກັນ ແທ້ເນີ.

- ອັນຫນຶ່ງ "ທີ່ບໍ່ສົມຄວນນັ່ງຢ່ານັ່ງ ບໍ່ສົມຄວນໄປກ່ອນ ຢ່າໄປກ່ອນ ບ່ອນບໍ່ສົມພໍ ນອນ ຢ່ານອນ ຄວາມຮູ້ບໍ່ສົມພໍສອນ ຢ່າສອນ ມ້າບໍ່ສົມພໍຂີ່ ຢ່າຂີ່ ທີ່ບໍ່ສົມພໍໄຕ່ ຢ່າໄຕ່ ໄພ່ບໍ່ ສົມພໍຂ້າ ຢ່າຂ້າ ຫນ້າບໍ່ສົມພໍຍິງ ຢ່າຍິງ ຢ່າແພ່ຄວາມລະຫັດ ຢ່າຕັດໄມ້ສີ ຢ່າມ້າງເຈດີ ຢ່າຕີ ນັກບວດ ຢ່າອວດຄຸນຕົວ ຢ່າມົວດ້ວຍລາບຍົດ ຢ່າຈິກຮູງູເຫົ່າ ຢ່າເຊົ່າຂອງທ່ານມາກິນ ຢ່າ ນິນທາສັງຄະ ຢ່າລະຄອງວັດ ຢ່າມັດຄົນດີ ຢ່າຕີຄົນຄຸ້ນ ຢ່າຫມຸນຄວາມເກົ່າ ຢ່າເວົ້າມາຍາ ຢ່າຊາຄົນງ່າວ ຢ່າກ່າວຕຽນຂວັນທ່ານລັບຫລັງ ຢ່າເອົາໄມ້ຕາງຫຽນ ຢ່າບຽດບຽນສັດນ້ອຍ ຢ່າປ້ອຍຜີທ່າ ຢ່າດ່າເທບພະດາ ຢ່າວ່າໂຕມີ ຢ່າເອົາຂອງທ່ານ ຢ່າພານອາດຍາ ຢ່າຊາຜົວ ເມັຽ ຢ່າເປັ່ງໄປກ່ອນ ຢ່າຢ່ອນນຳຫລັງ ຢ່ານັ່ງກາງຜູ້ເຖົ້າ ຢ່າເວົ້າອ້າງພະຫຍາ ຢ່າດ່າຄົນທຸກ ຢ່າສຸມໄພດົ້ນດຽວ ຢ່າຊ້ຽວຫາຄ່ຳ ຢ່ານ່ຳປາກກາຍທາງ ຢ່າອ້າງເຊີງຊູ້ ຢ່າກູ້ທ່ານມາກິນ ຢ່າ ພານຄອງເມືອງ ຢ່າເຄືອງຜູ້ເຖົ້າ ຢ່າເວົ້າຄວາມຕາຍ ຢ່າຈ່າຍເງິນແດງ ຢ່າແປງເງິນຄວ້າງ ຢ່າ ມ້າງທຳຜີ ຢ່າຍ່ອງຫນ້າ ຢ່າຊາເດັກ ຢ່າຂົບເຫຼັກຂົບທອງ ຢ່າປອງເປັນໂທດ ເຫັນເມັຽທ່ານ ຢ່າ ທ້າ ເຫັນຫນ້າທ່ານ ຢ່າຍິງ ຢ່ານອນເບິ່ງດາບ ຢ່າຄາບນົມເມັຽ ຢ່າເລັ່ງໃບຕອງ ຢ່າຕີນ້ຳໃຫ້ ເປັນຟອງ ທີ່ຍາກໃຫ້ຄອຍປອງ ທີ່ຫມອງໃຫ້ຄ່ອຍຜັດສີ ຄັນຈັກຫນີໃຫ້ຖາມຫມໍ ຈໍຂໍໃຫ້ຫຼິງດູສີ ຕີຫມາໃຫ້ຫຼິງດູເຈົ້າ ເຫັນເຈົ້າຈຶ່ງຖິ້ມເຂົ້າໃຫ້ຫມາ ຢ່າດ່າ ຢ່າປ້ອຍ ຢ່າເວນ ຢ່າຕີຫມູຊາ ຢ່າ ດ່າຫມາສຽດ ເພິ່ນຊື້ຖືກ ຢ່າໄດ້ວ່າແພງ ເພິ່ນຊື້ແພງ ຢ່າໄດ້ວ່າຖືກ ຊູ້ໃຜແມ່ນຕາ ຫູາໃຜແມ່ນ ມື" ເຫມືອນດັ່ງນາງອະມິດຕະຕາ ແຕ່ກ່ອນ ໄດ້ພໍ່ເຖົ້າມ່ອນເປັນຜົວ ພາມມະນາຫນຸ່ມເຫັນ ເຫລືອໃຈ ຍ້ອນໂຕບໍ່ໄດ້ເພິ່ນ ສັນນີ້ເພິ່ນເວົ້າວ່າ ບຸນໃຜບຸນມັນ ກຳໃຜກຳມັນ ຄັນທ່ານໄດ້ໂຕ ຫາກເຫຼືອໃຈແທ້ນາ.

- ອັນຫນຶ່ງປາກພົ້ນຕົວ ຫົວພົ້ນເພິ່ນ "ບໍ່ດີດາຍ ວ່າແຕ່ເພິ່ນຮ້າຍໂຕນັ້ນ ດີຫມົດ.

- ອັນຫນຶ່ງ "ບວດເປັນຊີ ຢ່າຫນີຈາກບ່ອນ" ເຂົາວ່າເຖົ້າມັກນອນມັກທ່ຽວ ອັນນີ້ ບໍ່ດີ ແທ້ແລ ./.